**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---

**ທະນາຄານແຫ່ງ ສປປ ລາວ**
ກົມຄຸ້ມຄອງລະບົບຊໍາລະສະສາງ

ເລກທີ 960/ຄລຊ
ນະຄອນຫຼວງວຽງຈັນ, ວັນທີ 24 ພະຈິກ 2021

## ໜັງສືສະເໜີ

**ຮຽນ:** ທ່ານ ຫົວໜ້າກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກໍາ ແລະ ການຄ້າ ທີ່ນັບຖື.

**ເລື່ອງ:** ການຂຶ້ນທະບຽນວິສາຫະກິດ ໃຫ້ແກ່ບໍລິສັດທີ່ດໍາເນີນທຸລະກິດ ກ່ຽວກັບຊັບສິນດິຈິຕອນ.

- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ກ່ຽວກັບທິດຊີ້ນໍາກ່ຽວກັບຜົນການຄົ້ນຄວ້າ ການທົດລອງຂຸດບິດຄອຍ; ການຂໍເຊັນສັນຍາຊື້-ຂາຍພະລັງງານໄຟຟ້າກັບບໍລິສັດທີ່ໃຫ້ເງື່ອນໄຂດ້ານລາຄາສູງສຸດ ເພື່ອນໍາໃຊ້ເຂົ້າໃນຂະແໜງກິດຈະການ Data Processing ຫຼື ການຂຸດບໍ່ດິຈິຕອນ (Crypto Currency) ສະບັບເລກທີ 1158/ຫສນຍ, ລົງວັນທີ 09 ກັນຍາ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການເຮັດທົດລອງທຸລະກໍາຊັບສິນດິຈິຕອນ ສະບັບເລກທີ 888/ກຕສ, ລົງວັນທີ 9 ພະຈິກ 2021.

ກົມຄຸ້ມຄອງລະບົບຊໍາລະສະສາງ (ຄລຊ) ຂໍຖືເປັນກຽດສະເໜີມາຍັງທ່ານ ກ່ຽວກັບການຂຶ້ນທະບຽນວິສາຫະກິດໃຫ້ແກ່ບໍລິສັດທີ່ດໍາເນີນທຸລະກິດ ກ່ຽວກັບຊັບສິນດິຈິຕອນ. ອີງຕາມແຈ້ງການຂອງ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1158/ຫສນຍ, ລົງວັນທີ 09 ກັນຍາ 2021 ແລະ ຂໍ້ຕົກລົງ ວ່າດ້ວຍການເຮັດທົດລອງທຸລະກໍາຊັບສິນດິຈິຕອນ ສະບັບເລກທີ 888/ກຕສ, ລົງວັນທີ 9 ພະຈິກ 2021, ໄດ້ເຫັນດີໃຫ້ບໍລິສັດ ທີ່ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ດໍາເນີນທຸລະກໍາທົດລອງ ກ່ຽວກັບຊັບສິນດິຈິຕອນ ຢູ່ ສປປ ລາວ ໂດຍໃນໄລຍະທົດລອງນີ້ ທຸລະກິດດັ່ງກ່າວແມ່ນຖືເປັນທຸລະກິດຄວບຄຸມທີ່ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງກ່ອນ ຄື: ❶ ການຂຸດຄົ້ນເງິນຄຣິບໂຕ ຕ້ອງໄດ້ຮັບໃບອະນຸຍາດດໍາເນີນທຸລະກິດຈາກ ກະຊວງເຕັກໂນໂລຊີ ແລະ ການສື່ສານ; ❷ ການຊື້-ຂາຍເງິນຄຣິບໂຕຕ້ອງໄດ້ຮັບໃບອະນຸຍາດດໍາເນີນທຸລະກິດຈາກ ທະນາຄານແຫ່ງ ສປປ ລາວ.

ປັດຈຸບັນ, ບໍລິສັດ ພູສີ ກຣຸບ ຈໍາກັດ (ໃບທະບຽນວິສາຫະກິດ ເລກທີ 0851/ຈວທ, ລົງວັນທີ 09 ມິຖຸນາ 2021, ອອກຊື່: ບໍລິສັດ ແວວນັນສ໌ເທຣດດິງອອນລາຍ ຈໍາກັດຜູ້ດຽວ) ມີການໂຄສະນາ ແລະ ເປີດໂຕ ກ່ຽວກັບການດໍາເນີນທຸລະກິດເງິນຄຣິບໂຕໃນສື່ອອນລາຍຂອງ Facebook Page ພາຍໃຕ້ຊື່ Welnance, ເວັບໄຊ້ Welnance.com ແລະ Platform ອອນລາຍອື່ນໆ (Twitter, YouTube, Instagram) ໂດຍຍັງບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງ ຊຶ່ງບໍ່ສອດຄ່ອງກັບ ຂໍ້ຕົກລົງ ວ່າດ້ວຍການເຮັດທົດລອງທຸລະກໍາຊັບສິນດິຈິຕອນ, ຄລຊ ຈຶ່ງໄດ້ອອກໜັງສືແຈ້ງຫາ ບໍລິສັດ ພູສີ



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

ຈຳກັດ ເພື່ອໃຫ້ບໍລິສັດຍຸຕິການໂຄສະນາ ແລະ ການເຄື່ອນໄຫວທີ່ຕິດພັນກັບຊັບສິນດິຈິຕອນ (ໜັງສືແຈ້ງຄັດຕິດມາພ້ອມນີ້).

ສະນັ້ນ, ເພື່ອຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບລະບຽບການ ຄລຊ ສະເໜີທ່ານພິຈາລະນາ ດັ່ງນີ້:

1. ໂຈະໃບທະບຽນວິສາຫະກິດ ຂອງ ບໍລິສັດ ແວວມັນສ໌ເທຣດດິ້ງອອນລາຍ ຈຳກັດຜູ້ດຽວ, ເລກທີ 0851/ຈວທ, ລົງວັນທີ 09 ມິຖຸນາ 2021 ຈົນກວ່າບໍລິສັດຈະໄດ້ຮັບອະນຸຍາດຢ່າງເປັນທາງການຈາກອົງການຄຸ້ມຄອງ;
2. ໃນການພິຈາລະນາຂຶ້ນທະບຽນວິສາຫະກິດ ໃຫ້ແກ່ບໍລິສັດທີ່ມາຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບຊັບສິນດິຈິຕອນໃນຕໍ່ໜ້າ, ສະເໜີທ່ານ ພິຈາລະນາໃຫ້ພາກສ່ວນ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຊັບສິນດິຈິຕອນຈາກອົງການຄຸ້ມຄອງເທົ່ານັ້ນ ໂດຍສະເໜີໃຫ້ປະສານສົມທົບມາຍັງ ພະແນກນະໂຍບາຍລະບົບຊຳລະ, ຄລຊ ໂທ 021-253595.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາຕາມທີ່ເຫັນສົມຄວນດ້ວຍ.

ຫົວໜ້າກົມ

ສຸລິສັກ ທຳນຸວົງ